ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ




ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ ໃນວັນທີ 15 ກັນຍາ 2020 ທີ່ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ ແລະ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມີບັນດາສະຫາຍຜູ້ຕາງໜ້າຈາກຄະນະຈັດຕັ້ງສູນກາງພັກ, ຫ້ອງວ່າການສູນກາງພັກ, ຄະນະກວດກາສູນກາງພັກ, ພະນັກງານປະຕິວັດອາວຸໂສ ບຳນານ; ຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງ ແລະ ບັນດາຜູ້ແທນສົມບູນຊຶ່ງເປັນຕົວແທນໃຫ້ແກ່ສະມາຊິກພັກທົ່ວອົງຄະນະພັກ ທຫລ ເຂົ້າຮ່ວມ.

ກອງປະຊຸມໃຫຍ່ໃນຄັ້ງນີ້, ສະຫາຍ ສອນໄຊ ສິດພະໄຊ ເລຂາຄະນະພັກ ທຫລ ໄດ້ຜ່ານຮ່າງບົດລາຍງານການເມືອງທັງສອງພາກ; ຜ່ານຮ່າງບົດສຳຫຼວດການນຳພາຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ III ທີ່ສະເໜີໂດຍສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ ທຫລ; ຫຼັງຈາກນັ້ນ, ກໍ່ໄດ້ມີການປະກອບຄຳຄິດຄຳເຫັນຕໍ່ຮ່າງບົດລາຍງານການເມືອງ ຢ່າງກົງໄປກົງມາ ແລະ ມີເນື້ອໃນໜັກແໜ້ນ, ຄົບຖ້ວນ ແລະ ກອງປະຊຸມ ໄດ້ເປັນເອກະສັນຮັບຮອງເອົາບົດລາຍງານການເມືອງ ແລະ ບົດສຳຫຼວດການນຳພາຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ III ຕໍ່ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງ ທຫລ.

ຈາກນັ້ນ, ບັນດາສະຫາຍຜູ້ແທນສົມບູນ ກໍ່ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານພັກ ທຫລ ຊຸດໃໝ່ ຊຶ່ງມີຜູ້ລົງສະໝັກທັງໝົດ 19 ສະຫາຍ ແລະ ໄດ້ເລືອກເອົາ 15 ສະຫາຍເປັນຄະນະບໍລິຫານງານພັກ ທຫລ ເພື່ອເປັນຫຼັກແຫຼ່ງນຳພາ, ເປັນໃຈກາງແຫ່ງການເຕົ້າໂຮມຄວາມສາມັກຄີເປັນເອກະພາບພາຍໃນຂະແໜງການທະນາຄານ, ປັບປຸງກໍ່ສ້າງສ້າງພັກໃຫ້ປອດໃສ ເຂັ້ມແຂງ ໜັກແໜ້ນ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກ ທຫລ.

 

ກອງປະຊຸມຄັ້ງປະຖົມມະລືກຂອງຄະນະບໍລິຫານງານພັກ ທຫລ ໄດ້ເປັນເອກະສັນເລືອກເອົາຄະນະປະຈຳພັກ ທຫລ 05 ສະຫາຍ ຊຶ່ງມີສະຫາຍ ສອນໄຊ ສິດພະໄຊ, ສະຫາຍ ຄຳວົງ ທິບພະວົງ; ສະຫາຍ ນາງ ວັດທະນາ ດາລາລອຍ, ສະຫາຍ ພຸດທະໄຊ ສີວິໄລ ແລະ ສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ. ກອງປະຊຸມຍັງໄດ້ເລືອກເອົາສະຫາຍ ສອນໄຊ ສິດພະໄຊ ເປັນເລຂາຄະນະພັກ, ສະຫາຍ ຄຳວົງ ທິບພະວົງ ເປັນຮອງເລຂາ, ສະຫາຍ ນາງ ວັດທະນາ ດາລາລອຍ ເປັນປະທານກວດກາ, ຮອງປະທານກວດກາ 2 ສະຫາຍຄື: ສະຫາຍ ວຽງສະຫວັນ ໄຊຍະວົງ ແລະ ສະຫາຍ ອາລຸນ ບຸນຍົງ. ກອງປະຊຸມຍັງໄດ້ພ້ອມກັນປ່ອນບັດເອົາຜູ້ແທນສົມບູນ ແລະ ສຳຮອງເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນຄັ້ງທີ XI ຂອງພັກປະຊາຊົນ ປະຕິວັດລາວ ທີ່ຈະເປີດຂຶ້ນໃນຕໍ່ໜ້ານີ້.

ໃນໂອກາດດັ່ງກ່າວ, ສະຫາຍນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ກໍ່ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ການຊີ້ນຳ-ນຳພາຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ III ໃນຕະຫຼອດ 5 ປີ ຜ່ານມາສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ພ້ອມນັ້ນຍັງເນັ້ນໃຫ້ເຊີດຊູ ຄວາມຮັບຜິດຊອບ, ຕິດຕາມກວດກາຢ່າງໃກ້ສິດວິໃນການເງິນບໍ່ໃຫ້ເກີດມີຊ່ອງຫວ່າງ; ສືບຕໍ່ເສີມຂະຫຍາຍຜົນງານດ້ານຕັ້ງໜ້າ ແລະ ແກ້ໄຂຈຸດອ່ອນ-ຂໍ້ຄົງຄ້າງໃນໄລຍະຜ່ານມາ ເປັນຕົ້ນສະກັດກັ້ນບັນຫາປະກົດການຫຍໍ້ທໍ້ຢູ່ບັນດາໜ່ວຍພັກ-ຮາກຖານພັກໃຫ້ຫຼຸດລົງເທື່ອລະກ້າວ ແລະ ຍັງຮຽກຮ້ອງມາຍັງຄະນະບໍລິຫານງານພັກ ທຫລ ຊຸດໃໝ່ຈົ່ງເອົາໃຈໃສ່ໃນການສ້າງ ແລະ ປັບປຸງພັກ, ສືບຕໍ່ປະຕິບັດໜ້າທີ່ວິຊາສະເພາະໃຫ້ດີຂຶ້ນກ່ວາເກົ່າໂດຍສະເພາະການຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ການສົ່ງເສີມການນຳໃຊ້ເງິນກີບ; ປັບປຸງ 3 ທະນາຄານລັດ ຢ່າງຮີບດ່ວນ; ການປ່ອຍສິນເຊື່ອຕ້ອງຕິດພັນກັບການຜະລິດທີ່ມີຄຸນນະພາບໃນນີ້ສິນເຊື່ອໃນພາກ SME ໃນດອກເບ້ຍຕ່ຳ, ໄວ ແລະ ໃຫ້ທັນສະພາບຂອງຜູ້ປະກອບການ; ແກ້ໄຂຂອດຂັ້ນການໃຫ້ສິນເຊື່ອ, ການໃຫ້ຄວາມຮູ້ກໍ່ຄວນງ່າຍດາຍ ແລະ ປະຕິບັດນະໂຍບາຍເງິນຕາໃຫ້ແທດເຖິງຕົວຈິງ, ກົມກຽວດ້ວຍມານະຈິດປະຕິວັດ ແລະ ບຸກທະລຸ ແລະ ຕ້ອງຫັນເອົາມະຕິກອງປະຊຸມໃຫຍ່ໃນຄັ້ງນີ້ ເປັນແຜນງານ, ໂຄງການ ແລະ ສ້າງເປັນນິຕິກຳລະອຽດ ເພື່ອຈັດຕັ້ງການເຜີຍແຜ່ ແລະ ເຊື່ອມຊຶມ, ຕັ້ງໜ້າປຸກລະດົມຖັນແຖວສະມາຊິກພັກ, ອີງການຈັດຕັ້ງມະຫາຊົນ ແລະ ພະນັກງານທົ່ວຂະແໜງການທະນາຄານ ເຂົ້າຮ່ວມຈັດຕັ້ງປະຕິບັດໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ